ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 1255/ປທສ

ນະຄອນຫຼວງວຽງຈັນ, ວັນທີ: 30 ມິຖຸ. 2020

# ຂໍ້ຕົກລົງ

## ວ່າດ້ວຍ ລະບົບເຄືອຂ່າຍອິນເຕີເນັດຂອງກະຊວງ ປທສ

- ອີງຕາມ ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016.
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ອິນເຕີເນັດ ລະຫັດຊື່ອິນເຕີເນັດ ຂອງ ສປປລາວ ສະບັບເລກທີ 164/ລບ, ລົງວັນທີ 21 ມີນາ 2012.
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ສະບັບເລກທີ 327/ລບ, ລົງວັນທີ 16 ກັນຍາ 2014.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງ, ຕິດຕາມກວດກາການນຳໃຊ້ລະບົບເຄືອຂ່າຍພາຍໃນ(Intranet) ແລະ ອິນເຕີເນັດ (Internet) ພາຍໃນກະຊວງ ປທສ ເພື່ອເຮັດໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະດວກວ່ອງໄວ ແນໃສ່ການນຳໃຊ້ລະບົບເຄືອຂ່າຍອິນເຕີເນັດຂອງກະຊວງ ປທສ ຖືກຕາມເປົ້າໝາຍ ແລະ ມີຄວາມເປັນເອກະພາບກັນ, ຮັບປະກັນຄວາມປອດໄພ ແລະ ຄວາມສະຖຽນ-ຍືນຍົງ ປະກອບສ່ວນເຂົ້າໃນວຽກງານໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນສູງສຸດ.

**ມາດຕາ 2 ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ**

ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ ແມ່ນການເຊື່ອມຕໍ່ລະບົບເຄືອຂ່າຍລະຫວ່າງບັນດາກົມ/ທຽບເທົ່າພາຍໃນກະຊວງ ປທສ ໃຫ້ສາມາດເຊື່ອມໂຍງຫາກັນໄດ້ ໂດຍຜ່ານສາຍແລນ (LAN) ແລະ ວາຍຟາຍ (WiFi) ແລະ ມີການເຊື່ອມຕໍ່ສູ່ອິນເຕີເນັດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ລະບົບເຄືອຂ່າຍພາຍໃນ (Intranet) ໝາຍເຖິງ ການເຊື່ອມຕໍ່ລະບົບເຄືອຂ່າຍພາຍໃນລະຫວ່າງບັນດາກົມ/ທຽບເທົ່າ ພາຍໃນກະຊວງ ປທສ;

2. ເຄື່ອງກະຈາຍສັນຍານ (WiFi Access Point) ໝາຍເຖິງ ອຸປະກອນສົ່ງສັນຍານເຄືອຂ່າຍ ຫຼື ສັນຍານອິນເຕີເນັດຫາຄອມພິວເຕີ ຫຼື ອຸປະກອນຕ່າງໆ ແບບບໍ່ມີສາຍ;

3. ເຄື່ອງແຈກ (Hub ຫຼື Switch) ໝາຍເຖິງ ອຸປະກອນທີ່ໃຊ້ໃນການເຊື່ອມຕໍ່ຫາຄອມພິວເຕີ ຊຶ່ງມີໜ້າທີ່ຮັບ-ສົ່ງຂໍ້ມູນໄປຫາຄອມພິວເຕີແຕ່ລະເຄື່ອງ;

4. ຄວາມໄວອິນເຕີເນັດ (Bandwidth) ໝາຍເຖິງ ປະລິມານການຮັບ ແລະ ການສົ່ງຂໍ້ມູນຂອງອິນເຕີເນັດ ຫຼື ຄວາມໄວອິນເຕີເນັດ;

5. ລະບົບຕິດຕາມ (Monitoring System) ໝາຍເຖິງ ລະບົບໂປຣແກຣມສຳລັບຕິດຕາມການໃຊ້ງານຂອງລະບົບເຄືອຂ່າຍ ແລະ ຄອມພິວເຕີ;

6. ລະບົບຄອມພິວເຕີ ໝາຍເຖິງ ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນທາງຄອມພິວເຕີ ທີ່ເຊື່ອມຕໍ່ລະບົບການປະຕິບັດການເຂົ້າດ້ວຍກັນ ໂດຍມີການກຳນົດຄຳສັ່ງ, ຊຸດຄຳສັ່ງ ຫຼື ສິ່ງອື່ນໆ ເພື່ອໃຫ້ອຸປະກອນເອເລັກໂຕຣນິກ ຫຼື ຊຸດອຸປະກອນຂອງຄອມພິວເຕີ ເຮັດໜ້າທີ່ປະມວນຜົນຂໍ້ມູນແບບອັດຕະໂນມັດໃນຄອມພິວເຕີໜຶ່ງໜ່ວຍ ແລະ ຫຼາຍໜ່ວຍທີ່ເຊື່ອມຕໍ່ຫາກັນຜ່ານ ເຄືອຂ່າຍຄອມພິວເຕີ ແລະ ເຄືອຂ່າຍອິນເຕີເນັດ;

7. ການເຊື່ອມຕໍ່ເຄືອຂ່າຍ ໝາຍເຖິງ ການເຊື່ອມຕໍ່ລະຫວ່າງເຄືອຂ່າຍໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການເພື່ອໃຫ້ຜູ້ໃຊ້ບໍລິການສາມາດຕິດຕໍ່ສື່ສານກັນໄດ້;

8. ຄວາມປອດໄພ ໝາຍເຖິງ ຄວາມປອດໄພຂອງລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ຂອງກະຊວງ ປທສ ຊຶ່ງລວມບັນດາເຄື່ອງອຸປະກອນຮາດແວ, ຊອບແວ, ລະບົບເຄືອຂ່າຍຄອມພິວເຕີ ແລະ ຂໍ້ມູນຂ່າວສານ;

9. ສື່ສັງຄົມ (Social media) ໝາຍເຖິງ ຮູບແບບການສື່ສານ (ໃນຮູບແບບຂໍ້ຄວາມ, ຂໍ້ຄວາມສຽງ,ຮູບພາບ, ວິດີໂອ) ແລະ ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນຕໍ່ເນື້ອໃນຂໍ້ມູນຂ່າວສານເປັນຕົ້ນ: ເຟສບຸກ, ທວິດເຕີ, ຢູທູບ ແລະ ອື່ນໆ;

10. ສື່ສັງຄົມອອນລາຍ (Social Network System) ໝາຍເຖິງ ການສື່ສານຜ່ານລະບົບເຄືອຂ່າຍອິນເຕີເນັດ ເພື່ອເຜີຍແຜ່ຂໍ້ມູນຂ່າວສານສູ່ສາທາລະນະ ດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນ;

11. ໂປຣແກຣມ VPN (Virtual Private Network) ໝາຍເຖິງ ການເຊື່ອມຕໍ່ຜ່ານເຊີເວີ ແລະ ການເຂົ້າລະຫັດຂໍ້ມູນຂອງ VPN ເພື່ອສາມາດອອກອິນເຕີເນັດໄດ້ ໂດຍທີ່ວ່າອິນເຕີເນັດຈາກອົງກອນຈຳກັດການນຳໃຊ້ອິນເຕີເນັດ;

12. ຜູ້ຄຸ້ມຄອງລະບົບ ໝາຍເຖິງ ສູນບໍລິຫານລັດດ້ວຍເອເລັກໂຕຣນິກ;

13. ຜູ້ນຳໃຊ້ລະບົບ ໝາຍເຖິງ ພະນັກງານ-ລັດຖະກອນຂອງກະຊວງ ປທສ ແລະ ບຸກຄົນອື່ນທີ່ມາພົວພັນວຽກທີ່ເຊື່ອມຕໍ່ເຂົ້າຫາອິນເຕີເນັດໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງ, ສົ່ງຕໍ່ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບັນດາກົມ/ທຽບເທົ່າ, ພະນັກງານລັດຖະກອນ ແລະ ທຸກພາກສ່ວນທີ່ນຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ພາຍໃນກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 2
## ການຄຸ້ມຄອງລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ

**ມາດຕາ 5 ລະບົບເຄືອຂ່າຍຂອງກະຊວງ ປທສ**

ລະບົບເຄືອຂ່າຍຂອງກະຊວງ ປທສ ແບ່ງອອກເປັນ 02 ລະບົບ ຄື:

1. ລະບົບເຄືອຂ່າຍພາຍໃນ (intranet);
2. ລະບົບເຄືອຂ່າຍອິນເຕີເນັດ (Internet).

**ມາດຕາ 6 ລະບົບເຄືອຂ່າຍພາຍໃນຂອງກະຊວງ ປທສ**

ລະບົບເຄືອຂ່າຍພາຍໃນຂອງກະຊວງ ປທສ ແມ່ນລະບົບການເຊື່ອມຕໍ່ເຄືອຂ່າຍພາຍໃນລະຫວ່າງບັນດາກົມ/ທຽບເທົ່າ ພາຍໃນກະຊວງ ປທສ ໃຫ້ມີການເຊື່ອມໂຍງຫາກັນໄດ້ ເພື່ອໃຫ້ມີຄວາມສະດວກໃນການແລກປ່ຽນຂໍ້ມູນຂ່າວສານ ແລະ ຕິດຕໍ່ພົວພັນວຽກງານເຊິ່ງກັນ ແລະ ກັນ ໄດ້ຢ່າງສະດວກ, ວ່ອງໄວ ແລະ ມີຄວາມປອດໄພ.

ການເຊື່ອມຕໍ່ເຄືອຂ່າຍພາຍໃນຂອງກະຊວງ ປທສ ໄດ້ແບ່ງການເຊື່ອມຕໍ່ອອກເປັນ 04 ຈຸດ ດັ່ງນີ້:

1. ຈຸດທີ1: ຕຶກຫ້ອງການກະຊວງ ປທສ;
2. ຈຸດທີ2: ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ບ້ານວັດນາກ);
3. ຈຸດທີ3: ຕຶກສູນອິນເຕີເນັດແຫ່ງຊາດ (ບ້ານສາຍລົມ);
4. ຈຸດທີ4: ຕຶກກົມຄົ້ນຄວາມຖີ່ (ບ້ານດົງໂພສີ).

**ມາດຕາ 7 ລະບົບເຄືອຂ່າຍອິນເຕີເນັດຂອງກະຊວງ ປທສ**

ລະບົບເຄືອຂ່າຍອິນເຕີເນັດຂອງກະຊວງ ປທສ ແມ່ນການເຊື່ອມຕໍ່ລະບົບເຄືອຂ່າຍຂອງ ບັນດາກົມ/ທຽບເທົ່າ ພາຍໃນກະຊວງ ປທສ ເຊື່ອມຕໍ່ຫາອິນເຕີເນັດ ໂດຍຜ່ານສາຍແລນ (LAN) ແລະ ວາຍຟາຍ (WiFi).

**ມາດຕາ 8 ປະເພດການເຊື່ອມຕໍ່ເຄືອຂ່າຍອິນເຕີເນັດ**

ລະບົບການເຊື່ອມຕໍ່ລະບົບເຄືອຂ່າຍຂອງກະຊວງ ປທສ ແບ່ງອອກເປັນ 02 ລະບົບ ດັ່ງນີ້:

1. ການນຳໃຊ້ລະບົບເຊື່ອມຕໍ່ດ້ວຍສາຍແລນ (LAN);
2. ການນຳໃຊ້ລະບົບເຊື່ອມຕໍ່ດ້ວຍ ວາຍຟາຍ (WiFi).

**ມາດຕາ 9 ການກຳນົດສິດເຂົ້າເຖິງການນຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ພາຍໃນກະຊວງ ປທສ**

ການນຳໃຊ້ລະບົບເຄືອຂ່າຍອິນເຕີເນັດຂອງກະຊວງ ປທສ ໄດ້ແບ່ງອອກເປັນ 03 ລະດັບ ດັ່ງນີ້:

1. ຄະນະນຳກະຊວງ, ຄະນະກົມ/ທຽບເທົ່າ ສາມາດນຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຜ່ານສາຍ (LAN) ຫຼື ວາຍຟາຍ (WiFi) ໂດຍບໍ່ຈຳກັດໃນການອອກອິນເຕີເນັດ;

2. ຄະນະພະແນກ ແລະ ວິຊາການສາມາດນຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຜ່ານສາຍ (LAN) ຫຼື ວາຍຟາຍ (Wi-Fi) ໂດຍໄດ້ຈຳກັດສັນຍານ Bandwidth ໃນການອອກອິນເຕີເນັດ ແລະ ການນຳໃຊ້ຂໍ້ມູນທີ່ເປັນ Streaming ແລະ YouTube;

3. ແຂກທີ່ມາພົວພັນວຽກ ສາມາດນຳໃຊ້ລະບົບເຄືອຂ່າຍພາຍໃນ ຫຼື ອິນເຕີເນັດ ແບບບໍ່ໃຊ້ສາຍ (WiFi) ຢູ່ໃນບໍລິເວນທີ່ກຳນົດເຊັ່ນ: ຫ້ອງປະຊຸມ, ບ່ອນທີ່ມາພົວພັນວຽກນຳ ຊຶ່ງໄດ້ຈຳກັດໃນການເຂົ້ານຳໃຊ້ສື່ສັງຄົມອອນລາຍ ເຊັ່ນ: Facebook, YouTube ແລະ ອື່ນໆ.

**ມາດຕາ 10 ການຮັກສາຄວາມປອດໄພຂອງລະບົບເຄືອຂ່າຍຂອງກະຊວງ ປທສ**

ການຮັກສາຄວາມປອດໄພຂອງລະບົບເຄືອຂ່າຍ ແລະ ໂອຊີທີຂອງກະຊວງ ປທສ ມີ ດັ່ງນີ້:

1. ມີລະບົບ Firewall ໃນການກຳນົດນະໂຍບາຍການຊົມໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ;

2. ມີລະບົບຕິດຕາມ (Monitoring System) ໃນການຕິດຕາມບັນດາເຄື່ອງອຸປະກອນ Traffic ແລະ ການຊົມໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດໃນແຕ່ລະຈຸດ;

3. ມີການປ້ອງກັນ Virus ເພື່ອປ້ອງກັນບໍ່ໃຫ້ເຄື່ອງຄອມພິວເຕີຕິດໄວຣັດ ແລະ ການປ້ອງກັນການແຜ່ຂອງໄວຣັດໃນລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ;

4. ມີການກວດສອບ ແລະ ສະກັດກັ້ນການໂຈມຕີຈາກການຄຸກຄາມຈາກຜູ້ບໍ່ຫວັງດີແບບ Real time.

**ມາດຕາ 11 ການຂໍສິດເຂົ້ານຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ**

ບັນດາກົມ/ທຽບເທົ່າ ຫຼື ພະນັກງານ-ລັດຖະກອນ ທີ່ມີຈຸດປະສົງນຳໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ ແມ່ນຕ້ອງໄດ້ເຮັດໜັງສືສະເໜີ ແລະ ປະກອບຕາມແບບຟອມ ຫາສູນບໍລິຫານລັດດ້ວຍເອເລັກໂຕຣນິກ ຕາມທີ່ໄດ້ກຳນົດໄວ້.

**ມາດຕາ 12 ການພິຈາລະນາອອກອະນຸມັດ**

ສູນບໍລິຫານລັດດ້ວຍເອເລັກໂຕຣນິກ ຈະພິຈາລະນາອະນຸມັດ ຫຼັງຈາກໄດ້ຮັບເອກະສານທີ່ປະກອບມາຄົບຖ້ວນ ພາຍໃນ 15 ວັນລັດຖະການ.

**ມາດຕາ 13 ອຸປະກອນເຊື່ອມຕໍ່ລະບົບເຄືອຂ່າຍຂອງກະຊວງ ປທສ**

ອຸປະກອນເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ(ICT) ຕ່າງໆ ທີ່ມີການເຊື່ອມຕໍ່ກັບລະບົບເຄືອຂ່າຍຂອງກະຊວງ ປທສ ປະກອບມີ: ຄອມພິວເຕີຕັ້ງໂຕະ, ຄອມພິວເຕີໂນດບຸກ, Printer, Scanner, ໂທລະສັບມືຖື, ອຸປະກອນລະບົບ

ເຄືອຂ່າຍ Router, Switch, Hub, Firewall, Server, LAN, ອຸປະກອນຮັບ-ສົ່ງສັນຍານວາຍຟາຍ (WiFi Access Point) ແລະ ລະບົບການສື່ສານອື່ນໆ.

**ມາດຕາ 14 ການຄຸ້ມຄອງ ແລະ ການນຳໃຊ້ອຸປະກອນ ເພື່ອເຊື່ອມຕໍ່ລະບົບເຄືອຂ່າຍຂອງກະຊວງ ປທສ.**

ການຄຸ້ມຄອງ ແລະ ນຳໃຊ້ອຸປະກອນ ເພື່ອເຊື່ອມຕໍ່ລະບົບເຄືອຂ່າຍ ມີດັ່ງນີ້:

1. ບັນດາກົມ/ທຽບເທົ່າ ມີໜ້າທີ່ຮັບຜິດຊອບຕິດຕາມການນຳໃຊ້ ແລະ ເບິ່ງແຍງເຄື່ອງອຸປະກອນທີ່ນຳໃຊ້ຢູ່ໃນຂອບເຂດກົມ/ທຽບເທົ່າຂອງຕົນເອງຮັບຜິດຂອບເຊັ່ນ: ເຄື່ອງສົ່ງສັນຍານອິນເຕີເນັດ (WiFi Access Point), ເຄື່ອງແຈກເຄືອຂ່າຍ (Hub/Switch) ແລະ ສາຍເຊື່ອມຕໍ່ລະບົບເຄືອຂ່າຍໃຫ້ຢູ່ໃນສະພາບດີ, ສາມາດໃຊ້ງານໄດ້ ພ້ອມກັນນັ້ນກໍ່ມີໜ້າທີ່ໃນການລາຍງານສະພາບການນຳໃຊ້ ຫຼື ບັນຫາຂັດຂ້ອງຕ່າງໆ ໃຫ້ຄະນະຮັບຜິດຊອບຄຸ້ມຄອງລະບົບເຄືອຂ່າຍ ຂອງກະຊວງ ປທສ ເພື່ອແກ້ໄຂໃຫ້ທັນເວລາ;

2. ທຸກເຄື່ອງອຸປະກອນ ICT ທີ່ຈະນຳມາເຊື່ອມຕໍ່ກັບລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ຂອງກະຊວງ ປທສ ຕ້ອງໄດ້ແຈ້ງ ຫຼື ໄດ້ຮັບອະນຸຍາດຈາກ ຜູ້ຄຸ້ມຄອງລະບົບເຄືອຂ່າຍພາຍໃນ ຂອງກະຊວງ ປທສ ກ່ອນ ຈຶ່ງຈະຕິດຕັ້ງ ແລະ ນຳໃຊ້ໄດ້ ເພື່ອຮັກສາຄວາມປອດໄພ ແລະ ຫຼຸດຜ່ອນຄວາມສ່ຽງຂໍ້ມູນຖືກທຳລາຍ;

3. ການເຊື່ອມຕໍ່ເຄື່ອງອຸປະກອນແຈກສັນຍານໃໝ່ (Hub/Switch ຫຼື WiFi Access Point) ເຂົ້າໃນລະບົບເຄືອຂ່າຍ ກະຊວງ ປທສ ຕ້ອງໄດ້ຮັບການອະນຸມັດຈາກຜູ້ຄຸ້ມຄອງລະບົບເຄືອຂ່າຍກະຊວງ ປທສ ກ່ອນທຸກຄັ້ງ.

## ໝວດທີ 3
## ສິດ ແລະ ໜ້າທີ່

**ມາດຕາ 15 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງລະບົບ**

ພະນັກງານຜູ້ຄຸ້ມຄອງລະບົບເຄືອຂ່າຍ ແລະ ໄອຊີທີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອະນຸຍາດໃຫ້ສິດນຳໃຊ້ລະບົບເຄືອຂ່າຍ ແລະ ໄອຊີທີໃນການນຳໃຊ້ເຂົ້າໃນວຽກງານຕົວຈິງຂອງບັນດາກົມ/ທຽບເທົ່າ ແລະ ພະນັກງານ-ລັດຖະກອນ ພາຍໃນກະຊວງ ປທສ;

2. ກຳນົດຂອບເຂດ ແລະ ສິດໃນການນຳໃຊ້ລະບົບເຄືອຂ່າຍ ແລະ ໄອຊີທີ ຂອງບັນດາກົມ/ທຽບເທົ່າ ແລະ ພະນັກງານ-ລັດຖະກອນ ພາຍໃນກະຊວງ ປທສ;

3. ຍົກເລີກຊື່ ແລະ ສິດນຳໃຊ້ລະບົບເຄືອຂ່າຍ ແລະ ໄອຊີທີ ຂອງພະນັກງານ-ລັດຖະກອນ ສຳລັບຜູ້ທີ່ບໍ່ໄດ້ສັງກັດໃນອົງການຈັດຕັ້ງ ຂອງກະຊວງ ປທສ ແລ້ວ;

4. ຍົກເລີກການນຳໃຊ້ລະບົບເຄືອຂ່າຍ ແລະ ໄອຊີທີ ຂອງຜູ້ນຳໃຊ້ລະບົບທີ່ກະທຳຜິດຕໍ່ຂໍ້ຫ້າມໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

5. ຢຸດຕິການເຊື່ອມຕໍ່ ຫຼື ການເຂົ້າຫາລະບົບຂອງຜູ້ນຳໃຊ້ລະບົບ ຫາກພົບວ່າເຄື່ອງຄອມພິວເຕີຂອງຜູ້ນຳໃຊ້ລະບົບດັ່ງກ່າວ ເປັນເຄື່ອງມີກະຈາຍໄວຣັດທີ່ຈະເປັນການທຳລາຍລະບົບຄວາມປອດໄພຂອງລະບົບລະບົບເຄືອຂ່າຍ ແລະ ໄອຊີທີ ພາຍໃນ ກະຊວງ ປທສ;

6. ສ້າງ, ເກັບຮັກສາລະຫັດຊື່, ລະຫັດຜ່ານ ແລະ ຂໍ້ມູນການໃຊ້ຂອງຜູ້ນໍາໃຊ້ລະບົບໃຫ້ມີຄວາມປອດໄພ ແລະ ປິດລັບ;

7. ອໍານວຍຄວາມສະດວກຕໍ່ການເຮັດວຽກຂອງລະບົບ ແລະ ບັນດາອຸປະກອນເຄືອຂ່າຍພາຍໃນ ແລະ ອິນເຕີເນັດເຮັດວຽກໄດ້ຕະຫຼອດ 24/7;

8. ປະຕິບັດສິດອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງຜູ້ນໍາໃຊ້**

ຜູ້ນໍາໃຊ້ລະບົບເຄືອຂ່າຍ ແລະ ໄອຊີທີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສາມາດນໍາໃຊ້ເຂົ້າໃນການຄົ້ນຄວ້າ, ໃນການຕິດຕໍ່ພົວພັນ ແລະ ປະສານງານວຽກລັດຖະການ ກັບບັນດາອົງການຈັດຕັ້ງພາກລັດ ຫຼື ພະນັກງານ-ລັດຖະກອນຕາມສິດ ແລະ ພາລະບົດບາດຂອງຕົນ;

2. ສະເໜີແກ້ໄຂລະຫັດຊື່ ແລະ ລະຫັດຜ່ານ ໃນກໍລະນີມີການຍົກຍ້າຍ ຫຼື ລະຫັດຊື່ຖືກລັກ;

3. ສະໜອງຂໍ້ມູນຢ່າງຖືກຕ້ອງ ແລະ ຊັດເຈນໃນການຂໍສິດນໍາໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ICT ຂອງກະຊວງ ປທສ;

4. ຕ້ອງເກັບຮັກສາ ແລະ ນໍາໃຊ້ລະຫັດຊື່ ພ້ອມທັງລະຫັດຜ່ານຂອງຕົນ ໃຫ້ປອດໄພ ແລະ ປິດລັບ;

5. ຕ້ອງຮັບຜິດຊອບຕິດຕາມຂໍ້ມູນການນໍາໃຊ້ລະບົບ ແລະ ບໍາລຸງຮັກສາເຄື່ອງອຸປະກອນທີ່ເຊື່ອມຕໍ່ກັບລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ລະບົບ ICT ພາຍໃຕ້ການຄຸ້ມຄອງຂອງຕົນ;

6. ຕ້ອງຮັບປະກັນຄຸນນະພາບ ແລະ ມາດຕະຖານຂອງເຄື່ອງອຸປະກອນ ພ້ອມທັງຂໍອະນຸມັດຈາກຜູ້ຄຸ້ມຄອງລະບົບ ກ່ອນຈະມີການເຊື່ອມຕໍ່ກັບລະບົບເຄືອຂ່າຍພາຍໃນຂອງກະຊວງ ປທສ ໃນແຕ່ລະຄັ້ງ ເພື່ອຮັບປະກັນຄວາມປອດໄພ;

7. ກໍລະນີ ຜູ້ນໍາໃຊ້ພົບເຫັນບັນຫາການໃຊ້ລະບົບເຄືອຂ່າຍພາຍໃນກະຊວງ ປທສ ຕ້ອງລາຍງານໃຫ້ກົມກອງຂອງຕົນສັງກັດຢູ່ ຫຼື ແຈ້ງຕໍ່ຜູ້ຄຸ້ມຄອງລະບົບ ເພື່ອຫາວິທີແກ້ໄຂໃຫ້ທັນເວລາ;

8. ຖ້າລະຫັດຊື່ຂອງຕົນ ຖືກລັກ ຫຼື ໂຈລະກໍາ ຕ້ອງແຈ້ງຕໍ່ຜູ້ຄຸ້ມຄອງລະບົບຢ່າງທັນທີ;

9. ໃນກໍລະນີຈໍາເປັນນໍາໃຊ້ຢາກເຂົ້າເບິ່ງບາງຂໍ້ມູນຈໍາເປັນສາມາດແຈ້ງຫາຜູ້ຄຸ້ມຄອງໂດຍກົງ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ຂໍ້ຫ້າມສໍາລັບຜູ້ຄຸ້ມຄອງລະບົບ**

ຫ້າມພະນັກງານຄຸ້ມຄອງລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ໄອຊີທີຂອງ ກະຊວງ ປທສ ມີພຶດຕິກໍາ ດັ່ງນີ້:

1. ຕິດຕັ້ງໂປຣແກຣມ, ຊອບແວ ຫຼື ໃຊ້ວິທີການອື່ນໆ ເພື່ອດຶງຂໍ້ມູນ, ສໍາເນົາຂໍ້ມູນຂອງຜູ້ອື່ນ ນໍາໄປໃຊ້ ຫຼື ເຜີຍແຜ່ ໂດຍບໍ່ໄດ້ຮັບອະນຸຍາດ;

2. ປັບປຸງ, ດັດແປງ ລະບົບຕາມລໍາພັງ ໂດຍບໍ່ມີການປຶກສາ ແລະ ບໍ່ໄດ້ຮັບອະນຸຍາດ;

3. ນໍາໃຊ້ຊື່ ແລະ ລະຫັດຜ່ານຂອງຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເຄື່ອນຍ້າຍບັນດາອຸປະກອນ ແຈກສັນຍານເຄືອຂ່າຍອິນເຕີເນັດ (WiFi) ແລະ ອຸປະກອນອື່ນໆ ຕາມລໍາພັງ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມອບສິດໜ້າທີ່ຂອງຕົນໃຫ້ບຸກຄົນອື່ນ ທີ່ບໍ່ຢູ່ໃນຄະນະຮັບຜິດຊອບຄຸ້ມຄອງລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດພາຍໃນກະຊວງ ປທສ;

6. ສວຍໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ພາຍໃນຂອງກະຊວງ ປທສ ເພື່ອເຄື່ອນໄຫວທຸລະກິດ, ສະແຫວງຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ ທີ່ກໍ່ໃຫ້ເກີດຜົນເສຍຫາຍແກ່ລັດ, ສັງຄົມ ຫຼື ຜິດຕໍ່ ກົດໝາຍ ແລະ ລະບຽບການ;

7. ນໍາເອົາຂໍ້ມູນ, ຊື່ ຫຼື ລະຫັດຜ່ານໄປເຜີຍແຜ່ຕໍ່ບຸກຄົນພາຍນອກຢ່າງເດັດຂາດ;

8. ນໍາໃຊ້ລະບົບເຄືອຂ່າຍກະຊວງ ປທສ ໂຈມຕີລະບົບເຄືອຂ່າຍ ແລະ ອຸປະກອນເຄືອຂ່າຍຂອງບຸກຄົນອື່ນ;

9. ມີພຶດຕິກໍາອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສໍາລັບຜູ້ນໍາໃຊ້**

ຫ້າມສໍາລັບຜູ້ໃຊ້ບໍລິການລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດ ກະຊວງ ປທສ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ອຸປະກອນໄອຊີທີ ຂອງກະຊວງ ປທສ ເຂົ້າໃນວຽກງານ ທີ່ເປັນລັກສະນະຜິດຕໍ່ກົດໝາຍ ແລະ ລະບຽບການ ເຮັດໃຫ້ມີຜົນການທົບທາງລົບຕໍ່ປະເທດຊາດ, ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ນໍາໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ອຸປະກອນໄອຊີທີ ຂອງກະຊວງ ປທສ ເພື່ອເຈາະລະບົບ, ໂຈລະກໍາຂໍ້ມູນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ລະບົບລວມ, ອົງການຈັດຕັ້ງ ແລະ ບຸກຄົນອື່ນ;

3. ນໍາເອົາລະຫັດຊື່ ແລະ ລະຫັດຜ່ານການນໍາໃຊ້ລະບົບເຄືອຂ່າຍຂອງຕົນ ໃຫ້ກັບຜູ້ອື່ນນໍາໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນໍາໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ອຸປະກອນໄອຊີທີ ຂອງກະຊວງ ປທສ ເພື່ອສົ່ງ ຫຼື ກະຈາຍໄວຣັດຄອມພິວເຕີ;

5. ນໍາໃຊ້ ຫຼື ພະຍາຍາມນໍາໃຊ້ລະຫັດຊື່ຂອງຜູ້ອື່ນ ໃນການເຂົ້າໃຊ້ລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດຂອງກະຊວງ ປທສ;

6. ສວຍໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ອຸປະກອນໄອຊີທີ ຂອງກະຊວງ ປທສ ເພື່ອເຄື່ອນໄຫວທຸລະກິດ, ສະແຫວງຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ ທີ່ກໍ່ໃຫ້ເກີດຜົນເສຍຫາຍແກ່ລັດ, ສັງຄົມ ຫຼື ຜິດຕໍ່ລະບຽບກົດໝາຍ;

7. ນໍາໃຊ້ຕິດຕັ້ງໂປຣແກຣມ ຫຼື ຊອບແວໃດໜຶ່ງ ທີ່ລົບກວນສັນຍານເຄືອຂ່າຍອິນເຕີເນັດ;

8. ດັດແປງ, ເຄື່ອນຍ້າຍບັນດາອຸປະກອນລະບົບເຄືອຂ່າຍ ຫຼື ເອົາອຸປະກອນໄອຊີທີອື່ນ ມາປ່ຽນແທນລະບົບເດີມ ໂດຍບໍ່ໄດ້ຮັບອະນຸຍາດ;

9. ຕິດຕັ້ງເຄື່ອງອຸປະກອນຮັບສັນຍານອິນເຕີເນັດ ເຂົ້າໃນລະບົບເຄືອຂ່າຍພາຍໃນ ແລະ ອິນເຕີເນັດກະຊວງ ປທສ ແລ້ວກະຈາຍຕໍ່ ໂດຍບໍ່ໄດ້ຮັບອະນຸຍາດ;

10. ບຸກຄົນພາຍນອກນຳອຸປະກອນ ICT ມາເຊື່ອມຕໍ່ກັບລະບົບເຄືອຂ່າຍ ກະຊວງ ປທສ. ຖ້າມີຄວາມຈຳເປັນແທ້ຕ້ອງແຈ້ງ ຫຼື ຂໍອະນຸຍາດຈາກຜູ້ຄຸ້ມຄອງລະບົບເຄືອຂ່າຍຂອງກະຊວງ ປທສ;

11. ນຳໃຊ້ລະບົບເຄືອຂ່າຍພາຍໃນ, ອິນເຕີເນັດ ແລະ ອຸປະກອນໄອຊີທີ ຂອງກະຊວງ ປທສ ເພື່ອສົ່ງຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງຕໍ່ສື່ສັງຄົມອອນໄລ;

12. ຕິດຕັ້ງໂປຣແກຣມ (VPN) ເພື່ອໃຊ້ເຂົ້າໃນການເບິ່ງວິດີໂອ (YouTube) ແລະ ເວັບໄຊອື່ນໆ;

13. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

### ມາດຕາ 19 ມາດຕາການຕໍ່ຜູ້ລະເມີດ

ພະນັກງານ-ລັດຖະກອນ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຖືກໂຈະ ແລະ ຖອນສິດນຳໃຊ້, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ປະຕິບັດໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 20 ການຈັດຕັ້ງປະຕິບັດ

ມອບໃຫ້ສູນບໍລິຫານລັດດ້ວຍເອເລັກໂຕຣນິກ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 21 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ